# ເຮົາຈະເກັບກຳຂໍ້ມູນຂອງທ່ານ ໄວ້ເປັນຄວາມລັບ

ເລື່ອງທຸກຢ່າງທີ່ທ່ານບອກພວກເຮົາຈະໄດ້ເກັບໄວ້ເປັນຄວາມລັບ. ນີ້ໝາຍຄວາມວ່າເຮົາບໍ່ສາມາດບອກຄົນອື່ນໄດ້ວ່າທ່ານໄດ້ບອກຫຍັງຫຼືເອົາຫຍັງໃຫ້ເຮົາ - ນອກຈາກວ່າທ່ານເຫັນພ້ອມ.

ບາງເທື່ອ ຫ້ອງການຊ່ວຍເຫຼືອດ້ານກົດໝາຍ (Legal Aid) ອາດຈະຊ່ວຍເຫຼືອເກີນນຶ່ງຄົນຂຶ້ນໄປໃນກໍຣະນີດຽວກັນ. ພວກເຮົາມີທະນາຍຄວາມຫຼາຍຄົນ. ສະນັ້ນ ທະນາຍຄວາມຄົນນຶ່ງຂອງພວກເຮົາອາດຈະຊ່ວຍທ່ານ, ໃນຂະນະທີ່ທະນາຍຄວາມອີກຄົນນຶ່ງຂອງ Legal Aid ອາດຈະຊ່ວຍຜູ້ທີ່ທ່ານມີເລື່ອງນຳ.

ຫຼືວ່າທະນາຍຄວາມອີກຄົນນຶ່ງອາດຈະຊ່ວຍຜູ້ນຶ່ງອີກທີ່ກ່ຽວຂ້ອງກັບເລື່ອງຂອງທ່ານ.

ຖ້າທ່ານຮັບເອົາການຊ່ວຍເຫຼືອຂອງພວກເຮົາ, ກໍໝາຍຄວາມວ່າທ່ານຮັບເອົາວິທີການທີ່ເຮົານຳມາໃຊ້ໃນການເກັບກຳຂໍ້ມູນຄວາມລັບຂອງທ່ານ.

### ມີແຕ່ທະນາຍຄວາມຂອງທ່ານເທົ່ານັ້ນທີ່ມີຂໍ້ມູນກ່ຽວກັບຕົວທ່ານ

ນີ້ໝາຍຄວາມວ່າທະນາຍຄວາມຂອງທ່ານຈະບໍ່ສາມາດ:

- ຮູ້ເລື່ອງຫຍັງກ່ຽວກັບອີກຄົນນຶ່ງ
- ເອົາຂໍ້ມູນກ່ຽວກັບອີກຄົນນຶ່ງ, ແລະ
- ແບ່ງປັນຂໍ້ມູນໃດໆກ່ຽວກັບຕົວທ່ານກັບທະນາຍຄວາມຂອງອີກຄົນນຶ່ງ.

ແລະທະນາຍຄວາມຂອງຄູ່ກໍຣະນີຂອງທ່ານຈະບໍ່ຮູ້ຫຍັງກ່ຽວກັບຕົວທ່ານຫຼືເລື່ອງຂອງທ່ານ.

### ທ່ານມີຄຳຖາມຫຍັງບໍ?

ຖ້າທ່ານມີຄຳຖາມໃດໆໃນເລື່ອງການເກັບກຳຂໍ້ມູນຂອງທ່ານໃຫ້ເປັນຄວາມລັບ, ຈົ່ງສອບຖາມກັບທະນາຍຄວາມຂອງທ່ານກ່ອນທີ່ທ່ານຈະບອກເລົ່າບັນຫາທາງກົດໝາຍຂອງທ່ານໃຫ້ເຂົາເຈົ້າຟັງ.

Legal Aid NEW SOUTH WALES